# ກອງປະຊຸມການວາງແຜນດຳເນີນງານຮ່ວມກັນຂອງບັນດາຄູ່ຮ່ວມງານດ້ານວິຊາການຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ພາຍໃຕ້ການສະໜັບສະໜູນທຶນຈາກລັດຖະບານປະເທດສະວິດເຊີແລນ ໂດຍຜ່ານອົງການຮ່ວມມືສະວິດເພື່ອການພັດທະນາ (SDC)
# ຈັດຂຶ້ນໃນລະຫວ່າງວັນທີ 30-31/07/2026, ຢູ່ທີ່ ນະຄອນຫຼວງວຽງຈັນ

ໂຄງການ ປຊກ ເປັນໂຄງການຮ່ວມມືກັບທະນາຄານໂລກ ກຳນົດຈັດຕັ້ງປະຕິບັດແຕ່ປີ 2024-2028, ຈັດຕັ້ງປະຕິບັດຢູ່ 450 ບ້ານທຸກຍາກຢູ່ເຂດ ຊົນນະບົດຫ່າງໄກສອກຫຼີກ ໃນ 14 ເມືອງທຸກຍາກ ຂອງ 7 ແຂວງ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ). ໃນທ້າຍປີ 2025, ລັດຖະບານປະເທດສະວິດເຊີແລນ ໄດ້ໃຫ້ທຶນຊ່ວຍເຫຼືອເພີ່ມ 8.1 ລ້ານໂດລາສະຫະລັດ ໃຫ້ແກ່ໂຄງການ ປຊກ ໂດຍຜ່ານອົງການຮ່ວມມືສະວິດເພື່ອການພັດທະນາ (SDC) ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຢູ່ 80 ບ້ານໃນ 6 ເມືອງ (ຍອດອູ, ຜົ້ງສາລີ, ປາກແບງ, ງາ, ໝອງແຮດ ແລະ ພູກູດ) ຂອງ 3 ແຂວງເປົ້າໝາຍ (ຜົ້ງສາລີ, ອຸດົມໄຊ ແລະ ຊຽງຂວາງ) ຕາມຜົນການວິເຄາະດ້ານພູມີທັດ ແລະ ຄວາມສ່ຽງດ້ານໄພພິບັດຈາກພາບຖ່າຍດາວທຽມຂອງສູນດາວທຽມແຫ່ງອົງການສະຫະປະຊາຊາດ (UNOSAT) ໂດຍນຳໃຊ້ຂໍ້ມູນ-ມາດຖານ ຕາມຄວາມໃກ້ຄຽງ ຫຼື ເຂດແດນບ້ານຮ່ວມກັນ, ພູມສັນຖານທີ່ຄ້າຍຄືກັນ, ອ່າງເກັບນ້ຳ (catchment), ນຳໃຊ້ແມ່ນ້ຳຮ່ວມກັນ, ນຳໃຊ້ເສັ້ນທາງຮ່ວມກັນ, ຊີວິດການເປັນຢູ່ ແລະ ສະພາບຂອງທ້ອງຖິ່ນທີ່ຄ້າຍຄືກັນ. ການຈັດຕັ້ງປະຕິບັດໃນບ້ວງທຶນເພີ່ມນີ້ ແມ່ນໃນຮູບແບບການມີສ່ວນຮ່ວມຂອງຫຼາຍພາກສ່ວນ ທັງພາກລັດ ແລະ ອົງການຈັດຕັ້ງສາກົນທີ່ສະໜອງການບໍລິການດ້ານວິຊາການ ແລະ ການສ້າງຕົວແບບດ້ານການພັດທະນາໃນຮູບແບບໝູ່ບ້ານ (cluster village).

ເພື່ອເປັນການລິເລີ່ມຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການ ປຊກ ບ້ວງທຶນເພີ່ມຮ່ວມກັບຄູ່ຮ່ວມງານດ້ານວິຊາການຕ່າງໆ, ໂຄງການ ປຊກ ຈິ່ງໄດ້ຈັດກອງປະຊຸມ ໃນວັນທີ 30-31 ກໍລະກົດ 2026 ທີ່ນະຄອນຫຼວງວຽງຈັນ ເພື່ອວາງແຜນດຳເນີນງານຮ່ວມກັນຂອງບັນດາຄູ່ຮ່ວມງານດ້ານວິຊາການ ແລະ ກຳນົດກົນໄກການດຳເນີນງານຮ່ວມກັນ, ໂດຍການເປັນປະທານຂອງ ທ່ານ ອາໂນສັກ ແພງທີມມະວົງ, ຮອງຫົວໜ້າກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ລວມທັງ ພາກລັດ ກໍຄື ບັນດາກົມຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຜູ້ໃຫ້ທຶນ (ອົງການຮ່ວມມືສະວິດເພື່ອການພັດທະນາ (SDC) ແລະ ຕາງໜ້າທະນາຄານໂລກ (WB) ປະຈຳ ສປປ ລາວ), ສູນ UNOSAT, ສູນຄຸ້ມຄອງສິ່ງແວດລ້ອມສາກົນ (ICEM), ສະຖາບັນຄຸ້ມຄອງນ້ຳສາກົນ (IWMI) ແລະ ທີມງານໂຄງການ ປຊກ (ສູນກາງ ແລະ ເມືອງ).

ກອງປະຊຸມຄັ້ງນີ້ເປັນການລິເລີ່ມຈັດຕັ້ງປະຕິບັດກິດຈະກຳຮ່ວມກັນກັບບັນດາຄູ່ຮ່ວມງານດ້ານວິຊາການ, ພ້ອມທັງເຮັດໃຫ້ຄູ່ຮ່ວມງານໄດ້ຮັບຮູ້ ແລະ ກຳໄດ້ພາບລວມຜົນຄືບໜ້າການຈັດຕັ້ງປະຕິບັດກິດຈະກຳໃນບັນດາບ້ານເປົ້າໝາຍໂຄງການຊຸດທີ 1 ແລະ 2 ແລະ ແຜນລວມຂອງໂຄງການ ປຊກ ແຕ່ປີ 2024-2028 ແລະ ແຜນການບ້ວງທຶນຊ່ວຍເຫຼືອເພີ່ມ, ຊຶ່ງ ນຳສະເໜີໂດຍ ທ່ານ. ປອ ວົງປະພັນ ມະນີວົງ, ຮັກສາການຜູ້ອຳນວຍການກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ຜູ້ຕາງໜ້າຈາກອົງການ SDC. ພ້ອມດຽວກັນນີ້, ກອງປະຊຸມຍັງໄດ້ເປີດໂອກາດໃຫ້ບັນດາຄູ່ຮ່ວມງານໄດ້ນຳສະເໜີແຜນການສະໜອງການບໍລິການດ້ານວິຊາການຂອງເຂົາເຈົ້າ, ການສ້າງຕົວແບບພັດທະນາ (model sites) ແລະ ການແລກປ່ຽນບົດຮຽນ-ຄຳຄິດຄຳເຫັນດ້ານວິຊາການຢ່າງກົງໄປກົງມາ ເພື່ອເຮັດໃຫ້ມີຄວາມເຂົ້າໃຈເປັນເອກະພາບໄປໃນທິດທາງດຽວກັນ ແລະ ປະກອບສ່ວນຕໍ່ການບັນລຸເປົ້າໝາຍຂອງໂຄງການທີ່ໄດ້ວາງໄວ້. ກິດຈະກຳຕົ້ນຕໍບ້ວງທຶນເພີ່ມປະກອບມີ: ການວາງແຜນພັດທະນາແບບພູມີທັດທີ່ສາມາດປັບຕົວເຂົ້າກັບການປ່ຽນແ ປງດິນຟ້າອາກາດ (CRLP), ກິດຈະກຳຍ່ອຍຊີວະວິສະວະກຳ (Green CRI), ກິດຈະກາຍ່ອຍບໍລິຫານຈັດການນ້ຳ (Blue CRI), ກິດຈະກຳຍ່ອຍເພື່ອສົ່ງເສີມກະສິກຳ (Grey CRI), ສ້າງຂີດຄວາມສາມາດດ້ານນິເວດກະສິກຳທີ່ທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ (CBCSA), ການແລກປ່ຽນຂໍ້ມູນ-ຂ່າວສານດ້ານເຕັກນິກກະສິກຳທີ່ທົນທານຕໍ່ດິນຟ້າອາກາດ ແລະ ການຕະຫຼາດ (CREATE) ແລະ ສະໜັບສະໜູນທຶນພັດທະນາຊຸມຊົນໃນບ້ານ (Block Grant) ໃນຮູບແບບເປັນກຸ່ມ ສຳລັບ ການຜະລິດສະບຽງອາຫານ ແລະ ກິດຈະກຳສ້າງລາຍຮັບ.










